ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ

ບົດຄຳອະທິບາຍ ແລະ ວິເຄາະຜົນການ ດຳເນີນງານຂອງຜູ້ບໍລິຫານ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

ທາງເລືອກທີ່ຍືນຍົງສຳລັບທ່ານ ພະລັງງານທີ່ຍືນຍົງສຳລັບຊາດ

ສາລະບານ

ອັກສອນຫຍໍ້.....2

ຊື່ໂຄງການ/ບໍລິສັດ.....3

ບົດສະຫລຸບຫຍໍ້ຂອງຜູ້ບໍລິຫານ.....4

1. ເຫດການສຳຄັນໃນປີ 2021.....6

2. ພາບລວມຂອງ ຜ-ຟຟລ ໃນປີ 2021.....7

2.1 ການຜະລິດຜະລັງງານຂອງໂຄງການໄຟຟ້າ ຜ-ຟຟລ.....8

2.2 ຄວາມຄືບໜ້າຂອງໂຄງການລົງທຶນຂອງ ຜ-ຟຟລ.....10

3. ການວິເຄາະຜົນການດຳເນີນງານຕາມງົບການເງິນລວມ.....12

3.1 ການວິເຄາະໃບລາຍງານຜົນໄດ້ຮັບ.....12

3.2 ການວິເຄາະໃບຖານະທາງການເງິນ.....15

3.3 ການວິເຄາະໃບລາຍງານກະແສເງິນສົດ.....17

4. ອັດຕາສ່ວນທາງການເງິນທີ່ສຳຄັນ.....18

ເອກະສານຊ້ອນທ້າຍ.....19

ອັກສອນຫຍໍ້	
ບໍລິສັດ	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ)
ຟຟລ	ລັດວິສາຫະກິດ ໄຟຟ້າລາວ
COD	ວັນທີດຳເນີນການຜະລິດ
EBITDA	ອັດຕາສ່ວນກຳໄລກ່ອນຫັກດອກເບ້ຍ, ອາກອນ, ຄ່າຫລຸ້ຍຫ້ຽນ ແລະ ຄ່າຕັດຮອນຕ່າງໆ
IPP	ຜູ້ຜະລິດໄຟຟ້າເອກະລາດ
PPA	ສັນຍາຊື້ຂາຍໄຟຟ້າ
FX	ອັດຕາແລກປ່ຽນສະກຸນເງິນຕາຕ່າງປະເທດ

ຊື່ໂຄງການ/ບໍລິສັດ	
ເທີນ-ຫີນບູນ	ບໍລິສັດ ເທີນ-ຫີນບູນ ພາວເວີ້ ຈຳກັດ
ຫ້ວຍເຫາະ	ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ
ນ້ຳງື່ມ 2	ບໍລິສັດ ໄຟຟ້າ ນ້ຳງື່ມ 2 ຈຳກັດ
ນ້ຳລີກ 1-2	ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ
ນ້ຳລອງ	ບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ
ນ້ຳງື່ມ 5	ບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ
ດອນສະໂຮງ	ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ
ນ້ຳແບ່ງ	ບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ
ໄຊຍະບູລີ	ບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ
ຫ້ວຍລຳພັນຕອນລຸ່ມ	ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ
ນ້ຳມັງ 1	ບໍລິສັດ ໄຟຟ້າ ນ້ຳມັງ 1 ຈຳກັດ
ນ້ຳເທີນ 1	ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ
ນ້ຳລີກ 1	ບໍລິສັດ ໄຟຟ້າ ນ້ຳລີກ 1 ຈຳກັດ
ນ້ຳດີກ 1	ບໍລິສັດ ໄຟຟ້າ ນ້ຳດີກ 1 ຈຳກັດ
ນ້ຳພູນ	ບໍລິສັດ ເຂື່ອນໄຟຟ້າ ນ້ຳພູນ ຈຳກັດ
ນ້ຳອູ	ບໍລິສັດ ໄຟຟ້າພະລັງນ້ຳ ນ້ຳອູ ຈຳກັດ
ນ້ຳທາ 1	ບໍລິສັດ ນ້ຳທາ 1 ພາວເວີ້ ຈຳກັດ
ນ້ຳບີ	ບໍລິສັດ ນ້ຳບີ ພາວເວີ ຈຳກັດ
ອີດີແອວ-ເຈັນ	ບໍລິສັດ ອີດີແອວ-ເຈັນ ໂຊລ່າ ພາວເວີ້ ຈຳກັດ
O&M	ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນ ຈຳກັດ ຜູ້ດຽວ
E&E	ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນເຊີວິສ ຈຳກັດ
RED Co	ບໍລິສັດ ອີດີແອວເຈັນ ເຣດ ຈຳກັດ

ບົດສະຫຼຸບຫຍໍ້ຂອງຜູ້ບໍລິຫານ

	2021	2020	ມູນຄ່າການປ່ຽນແປງ (ລ້ານກີບ)	ການປ່ຽນແປງ (%)
ລາຍຮັບທັງຫມົດ	2.212.671	1.710.170	502.501	29,38
ລາຍຈ່າຍທັງຫມົດ (ບໍ່ລວມ **FX**)	1.481.186	1.507.338	26.152	17,34
EBITDA (ບໍ່ລວມ **FX**)	1.992.967	1.459.889	533.078	36,51
ກຳໄລກ່ອນຜົນກະທົບຈາກ **FX**	731.485	202.832	528.653	26,06
ກຳໄລ(ຂາດທຶນ)ຈາກ **FX**	(612.913)	(45.389)	658.302	145
ກຳໄລໃນສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດ	3.882	157.443	153.651	97,59
ກຳໄລຕໍ່ຮຸ້ນ (ກີບ/ຮຸ້ນ)	2,62	94,49	91,87	97,22

ໃນປີ 2021 ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ມີກຳໄລສຸດທິເທົ່າ 3.882 ລ້ານກີບ, ເຊິ່ງຫຼຸດລົງຈາກປີຜ່ານມາ 153.561 ລ້ານກີບ ຫລື ເທົ່າກັບ 97,59%. ການຫຼຸດລົງຂອງກຳໄລສຸດທິມີສາເຫດຫລັກມາຈາກການຂາດທຶນຈາກອັດຕາແລກປ່ຽນ, ເຊິ່ງຂາດທຶນເພີ່ມຂຶ້ນ 145% ເມື່ອປຽບທຽບກັບປີຜ່ານມາ. ນອກຈາກນີ້ ອີກປັດໄຈຫນຶ່ງທີ່ມີສ່ວນເຮັດໃຫ້ກຳໄລສຸດທິຫລຸດລົງແມ່ນມາຈາກການເພີ່ມຂຶ້ນຂອງຕົ້ນທຶນ ແລະ ຄ່າໃຊ້ຈ່າຍລວມ ປະມານ 17,34% ເມື່ອທຽບກັບປີ 2020. ເຖິງຢ່າງໃດກໍຕາມ ຖ້າຫາກບໍ່ລວມຜົນກະທົບຈາກການຂາດທຶນຈາກອັດຕາແລກປ່ຽນຂອງບໍລິສັດ ເຫັນວ່າໃນປີ 2021 ບໍລິສັດ ມີ EBITDA ເທົ່າກັບ 1.992.967 ລ້ານກີບ ເພີ່ມຂຶ້ນ 36,51% ເມື່ອທຽບໃສ່ປີ 2020 ແລະ ກຳໄລກ່ອນຜົນກະທົບຈາກ FX ເທົ່າ 731.485 ລ້ານກີບ, ເພີ່ມຂຶ້ນ 26,06% ເມື່ອທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ.

1. ເຫດການສຳຄັນໃນປີ 2021

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ ຮັບລາງວັນທຸລະກິດອາຊຽນດີເດັ່ນແຫ່ງ ສປປ ລາວ ປະເພດບູລິມະສິດດີເດັ່ນ-ຂະແໜງການພະລັງງານ ໃນງານ “ມອບລາງວັນທຸລະກິດອາຊຽນດີເດັ່ນແຫ່ງ ສປປ ລາວ ລາງວັນການພັດທະນາສີມື ແຮງງານ ປະຈຳປີ 2021 ” (ASEAN Business Awards Laos and Skill Development) ໃນ ວັນທີ 4 ກຸມພາ 2022 ທີ່ໂຮງແຮມຄຣາວ ພລາຊາ ນະຄອນຫຼວງວຽງຈັນ.
2. ວັນທີ 19 ກຸມພາ ປີ 2021 ໄດ້ມີການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ ຖືຄອງ ຈຳນວນ 24% ໃຫ້ແກ່ ບໍລິສັດ ພີງຊັບທະວີກໍ່ສ້າງ ຂວາ-ທາງ, ເຄຫະສະຖານ ແລະ ຊຸມລະປະທານ ຈຳກັດຜູ້ດຽວ.
3. ວັນທີ 19 ມີນາ 2021 ກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ I/2021. ໄດ້ມີມະຕິອະນຸມັດແຕ່ງຕັ້ງຮອງ ປະທານສະພາບໍລິຫານເພີ່ມຈຳນວນ 01 ທ່ານ, ແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ຈຳນວນ 03 ທ່ານ ການຟື້ນ ຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ລາຍລະອຽດມີດັ່ງ:
    - ແຕ່ງຕັ້ງທ່ານ ປອ ບຸນທະວີ ສີສຸພັນທອງ ອະດີດຮອງລັດຖະມົນຕີ ກະຊວງແຜນການ ແລະ ການ ລົງທຶນ ເປັນ ກຳມະການສະພາບໍລິຫານອິດສະຫຼະ ແລະ ເປັນຮອງປະທານສະພາບໍລິຫານເພີ່ມ
    - ແຕ່ງຕັ້ງທ່ານ ພີງສະຫວັນ ເສນາພອນ ປະທານສະພາບໍລິຫານ ບໍລິສັດ ພີງຊັບທະວີ ກໍ່ສ້າງ-ຂົວທາງ ເຄຫາ ສະຖານ ແລະ ຊຸມລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ
    - ແຕ່ງຕັ້ງທ່ານ ສົມລັດ ເມກອາກາດ ຜູ້ອຳນວຍການບໍລິສັດ ພີງຊັບທະວີ ກໍ່ສ້າງ-ຂົວທາງ ເຄຫາສະຖານ ແລະ ຊຸມລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ
    - ແຕ່ງຕັ້ງທ່ານ ກຸນລະພັນ ວົງນາທີ ຮອງອຳນວຍການ ບໍລິສັດ ພີງຊັບທະວີ ກໍ່ສ້າງ-ຂົວທາງ ເຄຫາສະຖານ ແລະ ຊຸມລະປະທານ ຈຳກັດຜູ້ດຽວ ເປັນຮອງຜູ້ອຳນວຍການໃຫຍ່ເພີ່ມ
    - ອະນຸມັດໃຫ້ທ່ານ ໂກມົນຈັນ ເພັດອາສາ ຟື້ນຕຳແໜ່ງການເປັນກຳມະການສະພາບໍລິຫານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ເນື່ອງຈາກໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່
4. ວັນທີ 26 ເມສາ ປີ 2021 ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ມີການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ (ເພີ່ມ) 01 ທ່ານ ກຸນລະພັນ ວົງນາທີ
5. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ອອກຮຸ້ນກູ້ສະກຸນເງິນບາດທີ່ປະເທດໄທເພື່ອນຳໃຊ້ເຂົ້າໃນການຊຳລະຄືນເງິນ ຮຸ້ນກູ້ທີ່ຄົບກຳນົດ ຈຳນວນ 02 ຄັ້ງ ລາຍລະອຽດດັ່ງລຸ່ມນີ້:
    - ວັນທີ 13 ກໍລະກົດ 2021 ໄດ້ອອກຮຸ້ນກູ້ສະກຸນເງິນບາດລວມມູນຄ່າຈຳນວນ 2.099,40 ລ້ານບາດ.
    - ວັນທີອອກຮຸ້ນກູ້ສະກຸນເງິນບາດລວມມູນຄ່າຈຳນວນ 3.527,4 ລ້ານບາດ.
    - ລວມເປັນຈຳນວນທັງໝົດ 5.626,85 ລ້ານບາດ.

2. ພາບລວມຂອງ ຜ-ຟຟລ ໃນປີ 2021

ຮອດທ້າຍປີ 2021 ກຳລັງຕິດຕັ້ງ ຂອງບັນດາໂຄງການທີ່ ຜ-ຟຟລ ຄຸ້ມຄອງເອງ ແລະ ໂຄງການທີ່ ຜ-ຟຟລ ຖືຮຸ້ນໃນ IPPs ທີ່ດຳເນີນການຜະລິດແລ້ວ ມີທັງຫມົດ 1.682,6 ເມກາວັດ. ໃນນັ້ນ ໂຄງການພະລັງງານໄຟຟ້າ ທີ່ ຜ-ຟຟລ ຄຸ້ມຄອງເອງ ມີທັງຫມົດ 10 ໂຄງການ ລວມກຳລັງຕິດຕັ້ງ 699 ເມກາວັດ (ນັບລວມໂຄງການພາກຂະຫຍາຍນ້ຳງື່ມ 1) ແລະ ໂຄງການທີ່ ຜ-ຟຟລ ລົງທຶນຮ່ວມກັບບັນດາໂຄງການ IPPs ຈຳນວນ 16 ໂຄງການ ກຳລັງຕິດຕັ້ງທັງໝົດ 983,6 ເມກາວັດ, ໃນນັ້ນ, ໂຄງການພະລັງງານນ້ຳ 15 ໂຄງການ ແລະ ພະລັງງານແສງຕາເວັນ 1 ໂຄງການ.

ຜົນການດຳເນີນການຜະລິດໃນປີ 2021 ຂອງບັນດາໂຄງການໄຟຟ້າພະລັງງານນ້ຳ ທີ່ ຜ-ຟຟລ ຄຸ້ມຄອງເອງ ຈຳນວນ 10 ໂຄງການ ສາມາດຜະລິດພະລັງງານໄຟຟ້າໄດ້ທັງຫມົດ 2.292,04 GWh ຫຼື ເທົ່າກັບ 99,5 % ເມື່ອປຽບທຽບກັບປີຜ່ານມາ. ພ້ອມນັ້ນ, ການຜະລິດຂອງບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ຖືຮຸ້ນຢູ່ ຈຳນວນ 16 ໂຄງການ ແມ່ນສາມາດ ຜະລິດໄດ້ 4.948,33 GWh, ເຊິ່ງສາມາດຜະລິດໄດ້ເພີ່ມຂຶ້ນສູງເຖິງ 1.201,56 GWh ຫລື ປະມານ 32% ເມື່ອທຽບກັບປີ 2020. ສະນັ້ນ, ເຮັດໃຫ້ໃນປີ 2021 ຜ-ຟຟລ ແມ່ນສາມາດດຳເນີນການຜະລິດໄດ້ທັງຫມົດ 7.240,36 GWh ຫລື ເທົ່າກັບ 119,7% ທຽບກັບປີ 2020.

ພ້ອມດຽວກັນນັ້ນ, ມາຮອດທ້າຍປີ 2021 ບັນດາໂຄງການທີ່ ຜ-ຟຟລ ລໍຖ້າການຮັບໂອນຈາກ ຟຟລ ແລະ ລົງທຶນຮ່ວມກັບບັນດາ IPPs ໃນໄລຍະຜ່ານມາ ແມ່ນໄດ້ມີການຕິດຕາມ ແລະ ມີຄວາມຄືບຫນ້າຫລາຍສົມຄວນ, ເຊິ່ງໃນນັ້ນ ໂຄງການທີ່ເປັນຂອງ ຜ-ຟຟລ ຄຸ້ມຄອງເອງ ມີທັງຫມົດ 7 ໂຄງການ ລວມກຳລັງການຕິດຕັ້ງທັງຫມົດ 275 ເມກາວັດ ແລະ ໂຄງການທີ່ ຜ-ຟຟລ ຮ່ວມລົງທຶນກັບຜູ້ຜະລິດໄຟຟ້າເອກະລາດ (IPPs) ທັງຫມົດ 9 ໂຄງການ, ລວມກຳລັງຕິດຕັ້ງຕາມສັດສ່ວນການຖືຮຸ້ນທັງຫມົດ 494,3 ເມກາວັດ.

2.1 ການຜະລິດພະລັງງານຂອງໂຄງການໄຟຟ້າ ຜ-ຟຟລ

ຕາຕະລາງ 1: ການຜະລິດພະລັງງານໄຟຟ້າຂອງ 10 ໂຄງການ ທີ່ ຜ-ຟຟລ ຄຸ້ມຄອງ 100% (ຫົວໜ່ວຍ GWh/ປີ)

ລ/ດ	ຊື່ໂຄງການໄຟຟ້າ	2021	2020	ທຽບໃສ່ປີ 2020
1	ນ້ຳງື່ມ 1	844,68	803,11	105,18 %
2	ນ້ຳຄານ 2	276,74	275,14	100,58 %
3	ຫ້ວຍລຳພັນໃຫຍ່	339,19	392,00	86,53 %
4	ເຊເສັດ2	261,15	231,12	112,99 %
5	ນ້ຳເລິກ	170,76	214,80	79,50 %
6	ເຊເສັດ1	172,80	152,07	113,63 %
7	ນ້ຳມັງ 3	173,16	193,38	89,54 %
8	ນ້ຳສະນາ	38,35	34,90	109,88 %
9	ນ້ຳຊອງ	10,57	7,03	150,35 %
10	ເຊລະບ້ຳ	4,66	-	-
ລວມທັງຫມົດ:		**2.292,04**	**2.303,55**	**99,50 %**

ຕາຕະລາງ: ການຜະລິດພະລັງງານໄຟຟ້າຂອງ 16 ໂຄງການ ທີ່ ຜ-ຟຟລ ຖືຮຸ້ນໃນ IPPs (ຫົວໜ່ວຍ GWh/ປີ)

ລ/ດ	ຊື່ໂຄງການ	ສັດສ່ວນ ການຖືຮຸ້ນ	2021	2020	ທຽບໃສ່ປີ 2020
1	ເຫີນຫີນບູນ	60%	2.172,39	1.418,63	153,13%
2	ນ້ຳງື່ມ 2	25%	460,31	230,03	200,11%
3	ຫ້ວຍເຫາະ	20%	80,52	77,16	104,35%
4	ນ້ຳລອງ	20%	7,40	6,06	122,11%
5	ນ້ຳງື່ມ 5	15%	66,88	43,33	154,35%
6	ນ້ຳລີກ 1-2	10%	37,83	44,81	84,42%
7	ນ້ຳແບ່ງ	10%	7,03	4,16	168,89%
8	ດອນສະໂຮງ	20%	414,75	394,59	105,11%
9	ນ້ຳລີກ 1	10%	17,68	20,81	84,94%
10	ນ້ຳທາ 1	20%	55,13	35,42	155,65%
11	ນ້ຳມັ່ງ 1	10%	15,37	20,44	75,21%
12	ນ້ຳອູ 2	15%	39,27	45,85	85,70%
13	ນ້ຳອູ 5	15%	57,99	70,40	82,37%
14	ນ້ຳອູ 6	15%	27,18	49,25	55,18%
15	ໄຊຍະບູລີ	20%	1.460,94	1.260,29	115,92%
16	ພະລັງງານແສງຕາເວັນ	60%	27,64	25,55	108,18%
ລວມທັງໝົດ			**4.948,33**	**3.746,78**	**132,23%**

2.2 ຄວາມຄືບໜ້າຂອງໂຄງການລົງທຶນຂອງ ຜ-ຟຟລ

2.2.1 ໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງ 100%

ລ/ດ	ຊື່ໂຄງການ	ສັດສ່ວນຖືຮຸ້ນ	ກຳລັງຕິດຕັ້ງ (MW)	ສະຖານ ທີ່ ຕັ້ງ	COD	ຄວາມຄືບຫນ້າ
1	ເຊເສັດ2 (ພາກຂະຫຍາຍ)	100%	10	ສາລະວັນ	2021	89,13%
2	ເຊລະນຳ (ພາກຂະຫຍາຍ)	100%	8	ຈຳປາສັກ	2021	87,83%
3	ນ້ຳເງື່ມ 1 (ພາກຂະຫຍາຍ ຈັກເບີ 6)	100%	40	ວຽງຈັນ	2018	98,36%
4	ເຊເສັດ 3	100%	23	ສາລະວັນ	2018	100%
5	ນ້ຳຄານ 3	100%	60	ຫລວງພະບາງ	2018	100%
6	ນ້ຳຈຽນ	100%	104	ໄຊສົມບູນ	2018	100%
7	ນ້ຳຫີນບູນ	100%	30	ຄຳມ່ວນ	2018	89,66%
ລວມທັງໝົດ			**275**			

2.2.2 ໂຄງການພະລັງໄຟຟ້າທີ່ ຜ-ຟຟລ ຮ່ວມລົງທຶນ

ລຳດັບ	ຊື່ໂຄງການ	ສັດສ່ວນການຖືຮຸ້ນ	ກຳລັງຕິດຕັ້ງ (MW)	ກຳລັງຕິດຕັ້ງຕາມສັດສ່ວນ (MW)	ສະຖານທີ່ຕັ້ງ	COD	ຄວາມຄືບໜ້າ
1	ນ້ຳງຽບ 2	10%	180	18	ຊຽງຂວາງ	2016	100%
2	ຫ້ວຍລຳພັນ ຕອນລຸ່ມ	60%	15	9	ເຊກອງ	2021	100%
3	ເຊກະຫມານ 3	15%	250	37,5	ເຊກອງ	2022	100%
4	ນ້ຳເທີນ 1	15%	650	97,5	ບໍລິຄຳໄຊ	2022	98%
5	ນ້ຳດີກ 1	70%	15	10,5	ຫົວພັນ	2025	ກຳລັງກໍ່ສ້າງ
6	ນ້ຳດີກ 2-3	70%	25	17,5	ຫົວພັນ	2025	ກຳລັງກໍ່ສ້າງ
7	ນ້ຳພູນ	15%	45	23	ໄຊຍະບູລີ	2026	ກຳລັງກໍ່ສ້າງ
8	ນ້ຳບີ 1,2,3	80%	135	108	ເຊກອງ	2026	ກຳລັງກໍ່ສ້າງ
9	ປາກແບ່ງ	19%	912	173,3	ອຸດົມໄຊ	2030	ກຳລັງກໍ່ສ້າງ
ລວມທັງໝົດ			**2.227**	**494,3**			

3. ການວິເຄາະຜົນການດຳເນີນງານຕາມງົບການເງິນລວມ

3.1 ການວິເຄາະໃບລາຍງານຜົນໄດ້ຮັບ

3.1.1 ວິເຄາະລາຍຮັບທັງໝົດ

ປະເພດ	2021		2020		ການປ່ຽນແປງທຽບ 2020	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ລາຍຮັບຈາກການຂາຍໄຟຟ້າ	1.196.664	54,08	1.167.375	68,26	29.289	5,82
ລາຍຮັບອື່ນໆ	55.292	2,50	44.092	2,58	11.200	25,40
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນແລະບໍລິສັດຮຸ້ນສ່ວນ	960.715	43,42	498.703	29,16	462.012	92,64
ລາຍຮັບທັງຫມົດ	2.212.671	100	1.710.170	100	502.501	29,38

ລາຍຮັບທັງໝົດຂອງບໍລິສັດສຳລັບປີ 2021 ແມ່ນເທົ່າກັບ 2.212.671 ລ້ານກີບ, ເພີ່ມຂຶ້ນ 502.501 ລ້ານກີບ ຫລື ຄິດເປັນ 29,38% ທຽບໃສ່ປີ 2020. ໃນນັ້ນ, ລາຍຮັບຫລັກຂອງບໍລິສັດແມ່ນໄດ້ມາຈາກການຂາຍກະແສໄຟຟ້າ ລວມມູນຄ່າ 1.196.664 ລ້ານກີບ, ເພີ່ມຂຶ້ນ 5,82% ເມື່ອທຽບກັບປີກ່ອນ. ສາເຫດທີ່ລາຍຮັບທັງຫມົດເພີ່ມຂຶ້ນແມ່ນມາຈາກ ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ເພີ່ມຂຶ້ນເຖິງ 462.012 ລ້ານກີບ ຫຼື ທຽບເທົ່າ 92,64 %. ນອກນັ້ນ ຜ-ຟຟລ ຍັງມີລາຍຮັບອື່ນໆເພີ່ມຂຶ້ນ ລວມທັງຫມົດ 55.292 ລ້ານກີບ ຫລື ຄິດເປັນ 25,40% ເມື່ອທຽບກັບປີ 2020.

3.1.2 ວິເຄາະຕົ້ນທຶນ ແລະ ລາຍຈ່າຍທັງໝົດ

ລາຍລະອຽດ	2021	2020	ມູນຄ່າປ່ຽນແປງ (ລ້ານກີບ)	%
ຕົ້ນທຶນຂາຍ	585.971	567.894	18.077	3,18
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	154.090	198.319	(44.229)	(6,70)
ລາຍຈ່າຍທາງການເງິນ	855.815	741,125	114.690	17,50
ຂາດທຶນຈາກອັດຕາແລກປ່ຽນສຸດທິ	612.913	45,389	567.524	86,50
ຕົ້ນທຶນ ແລະ ລາຍຈ່າຍທັງໝົດ	2.208.789	1.552.727	656.062	42,25

ຕົ້ນທຶນ ແລະ ລາຍຈ່າຍທັງໝົດ ຂອງ ຜ-ຟຟລ ສຳລັບປີ 2021 ແມ່ນເທົ່າກັບ 2.208.789 ລ້ານກີບ, ເພີ່ມຂຶ້ນ 656.062 ລ້ານກີບ ຫລື ປະມານ 42,25 % ທຽບໃສ່ປີ 2020. ສາເຫດທີ່ເຮັດໃຫ້ຕົ້ນທຶນ ແລະ ລາຍຈ່າຍທັງຫມົດເພີ່ມຂຶ້ນມີດັ່ງລຸ່ມນີ້:

- ສຳລັບຕົ້ນທຶນການຂາຍ ໃນປີ 2021 ແມ່ນປະກອບມາຈາກ ຄ່າຫລ້ຽຫ້ຽນ ແລະ ຕັດຮອນຕົ້ນທຶນລາຍຈ່າຍ ລວມມູນຄ່າທັງຫມົດ 520.357 ລ້ານກີບ ຫລື ຄິດເປັນ 88,8% ຂອງຕົ້ນທຶນການຂາຍທັງຫມົດ. ຕົ້ນທຶນການຂາຍສ່ວນທີ່ຍັງເຫລືອແມ່ນປະກອບມີຄ່າສ້ອມແປງ, ຄ່າພາກຫລວງ, ຄ່າປະກັນໄພເຂື່ອນ ແລະ ລາຍຈ່າຍຄ່າເຊົ່າຕ່າງໆ.
- ລາຍຈ່າຍໃນການດຳເນີນງານ ແລະ ການບໍລິຫານ ລວມມູນຄ່າທັງຫມົດ 154.090 ລ້ານກີບ ໃນປີ 2021, ລຸດລົງ ປະມານ 6,70 % ທຽບກັບປີ 2020. ຄ່າໃຊ້ຈ່າຍສ່ວນໃຫຍ່ແມ່ນມາຈາກ ຄ່າໃຊ້ຈ່າຍພະນັກງານ, ອາກອນເງິນປັນຜົນ ແລະ ຄ່າທຳນຽມຕ່າງໆ.
- ໃນປີ 2021 ລາຍຈ່າຍທາງການເງິນ ຂອງບໍລິສັດເທົ່າ 855.815 ລ້ານກີບ ເພີ່ມຂຶ້ນຈາກປີຜ່ານມາປະມານ 17,50 % ແລະ ກວມເອົາປະມານ 38,74 % ຂອງ ຕົ້ນທຶນ ແລະ ລາຍຈ່າຍທັງຫມົດຂອງບໍລິສັດ. ລາຍຈ່າຍທາງການເງິນປະກອບດ້ວຍ ຄ່າໃຊ້ຈ່າຍດອກເບ້ຍຂອງເງິນກູ້ໄລຍະຍາວ ຂອງບັນດາໂຄງການທີ່ໄດ້ຮັບໂອນມາ ພ້ອມກັບການໂອນຊັບສິນຂອງບໍລິສັດ ແລະ ລວມທັງດອກເບ້ຍຮຸ້ນກູ້ທີ່ອອກໃນປີ 2014, 2016, 2018, 2019 ແລະ 2021. ດອກເບ້ຍຕ່າງໆ ເຫລົ່ານັ້ນແມ່ນຢູ່ລະຫວ່າງ 1,15% ຫາ 6,50%.

ປີ 2021 ບໍລິສັດແມ່ນຂາດທຶນຈາກອັດຕາແລກປ່ຽນລວມມູນຄ່າທັງຫມົດ 612.913 ລ້ານກີບ, ເຊິ່ງເມື່ອທຽບ ກັບປີ 2020 ເຫັນວ່າເພີ່ມຂຶ້ນສູງຫລາຍ, ສາເຫດຫລັກແມ່ນມາຈາກການແຂງຄ່າຂອງເງິນຕາຕ່າງປະເທດທຽບກັບເງິນກີບລາວ ເຮັດໃຫ້ມີການຮັບຮູ້ຂາດທຶນຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງ (Realized Loss on Exchange Rate) ໃນເວລາຊຳລະຄືນດອກເບ້ຍ ແລະ ເງິນຕົ້ນຂອງເງິນກູ້ ແລະ ຮຸ້ນກູ້.

3.1.3 ວິເຄາະຜົນກຳໄລ

	2021	2020	ມູນຄ່າ ປ່ຽນແປງ (ລ້ານກີບ)	ການປ່ຽນແປງ (%)
ລາຍຮັບທັງຫມົດ	2.212.671	1.710.170	502.501	29,3
ລາຍຈ່າຍທັງຫມົດ (ບໍ່ລວມ FX)	1.481.168	1.507.338	(26.170)	(1,7)
EBITDA (ບໍ່ລວມ FX)	1.992.967	1.459.889	533.078	36,5
ກຳໄລກ່ອນຜົນກະທົບຈາກ FX	731.503	202.832	528.671	260,6
ກຳໄລ(ຂາດທຶນ)ຈາກ FX	(612.913)	(45.389)	567.524	1.250,3
ກຳໄລໃນສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດ	3.882	157.443	(153.561)	(97,5)
ກຳໄລຕໍ່ຮຸ້ນ (ກີບ/ຮຸ້ນ)	2,61	94,49	(91,9)	(97,25)

ໃນປີ 2021 ຜົນການດຳເນີນງານ ຂອງ ຜ-ຟຟລ ແມ່ນມີກຳໄລກ່ອນຫັກຜົນກະທົບຈາກອັດຕາແລກປ່ຽນ ເທົ່າ 731.503 ລ້ານກີບ, ເຊິ່ງເພີ່ມຂຶ້ນສູງເຖິງ 260,6 % ເມື່ອທຽບໃສ່ປີ 2020. ສາເຫດຫລັກແມ່ນລາຍຮັບກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ເພີ່ມຂຶ້ນປະມານ 92,64 % ທຽບກັບປີ 2020. ເຖິງຢ່າງໃດກໍຕາມ, ເມື່ອມາເບິ່ງກຳໄລສຸດທິຂອງບໍລິສັດໃນປີ 2021 ແມ່ນມີມູນຄ່າເທົ່າກັບ 3.882 ລ້ານກີບ ຫລື ຄິດເປັນກຳໄລພື້ນຖານ 2,61 ກີບຕໍ່ຮຸ້ນ, ຫລຸດລົງຈຳນວນ 91,9 ລ້ານກີບ ຫລື ປະມານ 97.25 % ທຽບກັບປີ ຜ່ານມາ. ສາເຫດທີ່ພາໃຫ້ກຳໄລສຸດທິຫລຸດລົງແມ່ນມາຈາກການຂາດທຶນຈາກອັດຕາແລກປ່ຽນໃນປີ 2021 ສູງເຖິງ 1.250,35 % ທຽບໃສ່ປີ 2020.

3.2 ການວິເຄາະໃນຖານະທາງການເງິນ

3.2.1 ວິເຄາະຊັບສິນ

ຮອດມື້ສິ້ນສຸດປີ 2021, ຜ-ຟຟລ ມີຍອດລວມຊັບສິນທັງໝົດ ຈຳນວນ 26.552.167 ລ້ານກີບ, ເພີ່ມຂຶ້ນ 1.849.341 ລ້ານກີບ ຫຼື 7,49 % ເມື່ອທຽບໃສ່ປີທີ່ສິ້ນສຸດປີ 2020, ເຊິ່ງສາເຫດ ຫລັກແມ່ນມາຈາກການເພີ່ມຂຶ້ນຂອງຊັບສິນ ຫມຸນວຽນ, ໂດຍສະເພາະແມ່ນ ຫນີ້ຕ້ອງຮັບການຄ້າ ແລະ ຫນີ້ຕ້ອງຮັບອື່ນໆ ເພີ່ມຂຶ້ນເຖິງ 712.086 ລ້ານກີບ ແລະ ຈາກການ ແປງຄ່າເອກະສານທາງການເງິນ ທີ່ເປັນເງິນຕາຕ່າງປະເທດ.

	2021	2020	ມູນຄ່າປ່ຽນແປງ (ລ້ານກີບ)	ການປ່ຽນແປງ (%)
ຊັບສິນໝຸນວຽນ	6.426.838	4.404.427	2.022.411	45,92
ຊັບສິນບໍ່ໝຸນວຽນ	20.125.329	20.298.399	(173.070)	(0,83)
ລວມຊັບສິນທັງໝົດ	**26.552.167**	**24.702.826**	**1.849.341**	**7,49**

ຫນີ້ຕ້ອງຮັບການຄ້າ ແລະ ຫນີ້ຕ້ອງຮັບອື່ນໆ ເພີ່ມຂຶ້ນ ເຖິງ 712.086 ລ້ານກີບ ຫລື 47,16 % ເມື່ອທຽບກັບທ້າຍປີ 2020, ສາເຫດຫລັກແມ່ນການເພີ່ມຂຶ້ນຂອງຫນີ້ການຄ້າ ຂອງ ຟຟລ ແລະ ຍັງສົ່ງຜົນເຮັດໃຫ້ ເງິນສົດ ແລະ ທຽບເທົ່າເງິນສົດໃນ ທ້າຍປີ 2021 ຫລຸດລົງ ຈຳນວນ 62.969 ລ້ານກີບ ຫລື 23,71% ທຽບກັບປີຜ່ານມາ.

ນອກຈາກນັ້ນ ຍັງມີການເພີ່ມຂຶ້ນຂອງຊັບສິນຫມຸນວຽນອື່ນໆ ສູງເຖິງ 1.322.322 ລ້ານກີບ ຫລື ປະມານ 57,3 % ທຽບໃສ່ ທ້າຍປີ 2020. ສາເຫດຫລັກແມ່ນເປັນຜົນມາຈາກການນຳ ໃຊ້ນະໂຍບາຍ ການບັນຊີກ່ຽວກັບການຮັບຮູ້ກຳໄລ (ຂາດທຶນ)ຈາກອັດຕາແລກປ່ຽນ ນັບແຕ່ປີ 2020 ເປັນຕົ້ນມາ, ເຊິ່ງລາຍລະອຽດແມ່ນ ຢູ່ໃນບົດອະທິບາຍຊ້ອນທ້າຍປະກອບ ເອກະ ສານລາຍງານການເງິນ ປະຈຳປີ 2020

3.2.2 ວິເຄາະໜີ້ສິນ

	2021	2020	ມູນຄ່າປ່ຽນແປງ (ລ້ານກີບ)	ການປ່ຽນແປງ (%)
ຫນີ້ສິນໝຸນວຽນ	3.392.350	3.944.216	(551.866)	(13,99)
ຫນີ້ສິນບໍ່ໝຸນວຽນ	13.929.223	11.464.890	2.464.333	21,49
ລວມຫນີ້ສິນທັງໝົດ	17.321.573	15.409.106	1.912.467	12,41

ຮອດທ້າຍປີ 2021, ບໍລິສັດມີຫນີ້ສິນທັງຫມົດ 17.321.573 ລ້ານກີບ, ເພີ່ມຂຶ້ນ 1.912.467 ລ້ານກີບ ຫລື ຄິດເປັນ 12,41 % ທຽບກັບທ້າຍປີ 2020. ສາເຫດຫລັກແມ່ນມາຈາກການແຂງຄ່າຂອງເງິນຕາຕ່າງປະເທດ ເຮັດໃຫ້ໜີ້ຮຸ້ນກູ້ ແລະ ຮຸ້ນກູ້ສຸດທິ ທີ່ໄດ້ຮັບການແປງຄ່າເປັນສະກຸນເງິນກີບມີຈຳນວນເພີ່ມສູງຂຶ້ນ.

ຫນີ້ສິນຫລັກຂອງບໍລິສັດແມ່ນເປັນຮຸ້ນກູ້ ແລະ ເງິນກູ້ຢືມໄລຍະຍາວ ກວມເອົາສັດສ່ວນ 62,06 % ແລະ 27,98 % ຕາມລຳດັບ. ເງິນກູ້ຢືມ ໄລຍະຍາວຂອງບໍລິສັດແມ່ນສ່ວນໃຫຍ່ເປັນ ເງິນກູ້ທີ່ບໍ່ມີຫລັກຊັບຄ້ຳປະກັນ, ເຊິ່ງປະກອບມີທັງສະກຸນເງິນໂດລາສະຫະລັດ, ຢູໂຣ ແລະ ເຢນ ແລະ ອັດຕາດອກເບ້ຍແມ່ນຢູ່ໃນລະຫວ່າງ 1,15% ຫາ 5%. ສຳລັບຮຸ້ນກູ້ແມ່ນເປັນສະກຸນເງິນໂດລາສະຫະລັດ ແລະ ສະກຸນເງິນໄທບາດ, ເຊິ່ງມີອັດຕາ ດອກເບ້ຍ ຢູ່ໃນ ຊ່ວງ 3,90% ຫາ 6,50%.

3.2.3 ວິເຄາະທຶນ

	2021	2020	ມູນຄ່າປ່ຽນແປງ (ລ້ານກີບ)	ການປ່ຽນແປງ (%)
ລວມທຶນທັງໝົດ	9.230.594	9.293.720	(63.126)	(0,68)

ໃນທ້າຍປີ 2021 ທຶນທັງຫມົດຂອງຜູ້ຖືຮຸ້ນແມ່ນເທົ່າກັບ 9.230.594 ລ້ານກີບ, ເມື່ອທຽບ ໃສ່ທ້າຍປີ 2020 ແມ່ນລຸດລົງ 63.126 ລ້ານກີບ ຫລື ເທົ່າກັບ 0,68 %. ສາເຫດແມ່ນມາຈາກກຳໄລສະສົມຂອງບໍລິສັດຫລຸດລົງ 164.240 ລ້ານກີບ ຫລື ປະມານ 16,6 % ທຽບກັບປີ 2020, ເຊິ່ງເປັນຜົນມາຈາກການຈ່າຍເງິນປັນຜົນ.

3.3 ການວິເຄາະໃບລາຍງານກະແສເງິນສົດ

	2021	2020	ມູນຄ່າປ່ຽນແປງ (ລ້ານກີບ)
ກະແສເງິນສົດຈາກກິດຈະກຳການດຳເນີນງານສຸດທິ	(53.999)	(360.776)	306.777
ກະແສເງິນສົດຈາກກິດຈະກຳການລົງທຶນສຸດທິ	383.005	184.877	198.128
ກະແສເງິນສົດສຸດທິຈາກກິດຈະກຳການເງິນສຸດທິ	(434.332)	(513.234)	78.902
ການເພີ່ມຂຶ້ນ (ຫຼຸດລົງ) ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	(105.326)	(689.133)	583.807
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	265.554	979.774	(714.220)
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດແລະ ລາຍການທຽບເທົ່າເງິນສົດ	42.357	(25.087)	67.444
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	202.585	265.554	(62.969)

3.3.1 ກະແສເງິນສົດສຸດທິຈາກການດຳເນີນງານ

ໃນປີ 2021 ກະແສເງິນສົດສຸດທິຈາກການດຳເນີນງານສຸດທິແມ່ນເທົ່າກັບ 53.999 ລ້ານກີບ. ສາເຫດທີ່ສຳຄັນແມ່ນເກີດມາຈາກ ຫນີ້ຕ້ອງຮັບຈາກລູກຄ້າ ແລະ ຫນີ້ຕ້ອງຮັບອື່ນໆຂອງບໍລິສັດລຸດລົງ ຈຳນວນ 367.292 ລ້ານກີບ ຫລື ປະມານ 38,35 % ທຽບກັບທ້າຍປີ 2020 ໂດຍສະເພາະແມ່ນຫນີ້ຄ່າກະແສໄຟຟ້າ ຂອງ ລັດວິສາຫະກິດໄຟຟ້າລາວ.

3.3.2 ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ

ຮອດທ້າຍປີ 2021 ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ ແມ່ນເທົ່າກັບ 383.005 ລ້ານກີບ ເຊິ່ງເພີ່ມຂຶ້ນ 198.128 ລ້ານກີບ ທຽບກັບປີ 2020 ຫຼື 107 %. ສາເຫດຫລັກແມ່ນບໍລິສັດໄດ້ຮັບເງິນປັນຜົນຈາກການລົງທຶນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈຳນວນ 475.472 ລ້ານກີບ.

3.3.3 ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ

ທ້າຍປີ 2021 ກະແສເງິນສົດທີ່ໃຊ້ໃນກິດຈະກຳທາງການເງິນແມ່ນເທົ່າກັບ 434.332 ລ້ານກີບ.ສາເຫດຫລັກແມ່ນ ບໍລິສັດໄດ້ຮັບເງິນສົດຈາກການອອກຮຸ້ນກູ້ຈຳນວນ 1.905.346 ລ້ານກີບ ແລະ ເງິນສົດຈາກການກູ້ຢືມໄລຍະສັ້ນ ຈຳນວນ 682.253 ລ້ານກີບ, ພ້ອມດຽວກັນນັ້ນໄດ້ມີການຊຳລະຮຸ້ນກູ້ທີ່ຄົບກຳນົດ, ຊຳລະເງິນກູ້ໄລຍະສັ້ນ ແລະ ໄລຍະຍາວ ລວມທັງຈ່າຍ ເງິນປັນຜົນ ລວມມູນຄ່າ 3.021.931 ລ້ານກີບ.

4. ອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນການເງິນທີ່ສຳຄັນ	ໜ່ວຍ	2021	2020
ກຳໄລຂັ້ນຕົ້ນ	%	51,03	51,35
ອັດຕາສ່ວນ **EBITDA**[1]	%	91,16	89,04
EBITDA ຕໍ່ຊັບສິນທັງໝົດ	%	7,6	6,16
ອັດຕາສ່ວນກຳໄລສຸດທິ	%	0,18	9,21
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ	%	0,02	0,65
ອັດຕາສ່ວນຜົນຕອບແທນຕໍ່ທຶນ	%	0,04	1,69
ກຳໄລພື້ນຖານຕໍ່ຮຸ້ນ	ກີບ/ຮຸ້ນ	2,62	94,49
ອັດຕາສ່ວນໜີ້ຕໍ່ທຶນ	ເທົ່າ	1,88	165,80
ອັດຕາສ່ວນທຶນໝຸນວຽນ	ເທົ່າ	1,89	1,12

ໝາຍເຫດ: [1] EBITDA ແມ່ນຍໍລວມກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ

ເອກະສານຊ້ອນທ້າຍ

ສູດຄິດໄລ່ອັດຕາສ່ວນສຳຄັນທາງການເງິນ	
ອັດຕາສ່ວນກຳໄລຂັ້ນຕົ້ນ **(Gross Profit Margin)**	= ກຳໄລຂັ້ນຕົ້ນ/ລາຍຮັບຈາກການຂາຍ
ອັດຕາສ່ວນ **EBITDA** **(EBITDA Margin)**	= **EBITDA** / ລາຍຮັບທັງໝົດ
ອັດຕາສ່ວນ **EBITDA** ຕໍ່ຊັບສິນທັງຫມົດ **(EBITDA to Assets)**	= **EBITDA** / ຊັບສິນທັງຫມົດ
ອັດຕາສ່ວນກຳໄລສຸດທິ **(Net Profit Margin)**	= ກຳໄລສຸດທິ / ລາຍຮັບທັງໝົດ
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (**Return on Assets: ROA**)	= ກຳໄລສຸດທິ / ລວມຍອດຊັບສິນ
ອັດຕາສ່ວນຜົນຕອບແທນຕໍ່ທຶນ **(Return on Equity: ROE)**	= **Net Profit / Total Equity** ກຳໄລສຸດທິ / ລວມທຶນ
ກຳໄລພື້ນຖານຕໍ່ຮຸ້ນ **(Earning per share)**	= ກຳໄລສຸດທິ / ຈຳນວນຮຸ້ນສະເລ່ຍທັງຫມົດຂອງບໍລິສັດ
ອັດຕາສ່ວນທຶນຫມຸນວຽນ (**Current Ratio**)	= **Current Assets / Current Liabilities** ຊັບສິນໝຸນວຽນ/ ໜີ້ສິນໝຸນວຽນ

ທາງເລືອກທີ່ຍືນຍົງສຳລັບທ່ານ
ພະລັງງານທີ່ຍືນຍົງສຳລັບຊາດ



ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທີ່ຢູ່:ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ ຕູ້ ປ.ນ 2392
ໂທລະສັບ: (856-21) 316142, ແຟັກ: (856-21) 316141